**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳແລະ ການຄ້າ

ເລກທີ 0167 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 09 ກຸມພາ 2023

# ຂໍ້ຕົກລົງ
# ວ່າດ້ວຍ ການຮັບຮອງເອົາບັນຊີກິດຈະການ
# ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ຕ້ອງຂໍອະນຸຍາດສ້າງຕັ້ງໂຮງງານ

- ອີງຕາມ ກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 604/ນຍ, ລົງວັນທີ 15ຕຸລາ 2021;
- ອີງຕາມ ໜັງສືສະເໜີຂອງກົມອຸດສາຫະກຳ ແລະ ຫັດຖະກຳ ສະບັບເລກທີ 0050/ກອຫ.ຄຮ, ລົງວັນທີ 06 ມັງກອນ 2023.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

**ມາດຕາ 1** ຮັບຮອງເອົາບັນຊີກິດຈະການໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ຕ້ອງຂໍອະນຸຍາດສ້າງຕັ້ງໂຮງງານ ດັ່ງລຸ່ມນີ້:

| ລ/ດ | ລະຫັດ LSIC | ກິດຈະການ |
|---|---|---|
| 1 | 1041-1049 | ການປຸງແຕ່ງນ້ຳມັນ, ໄຂມັນ ຈາກຜັກ ແລະ ສັດ |
| | 1061-1063 | ການຜະລິດແປ້ງ ແລະ ການປຸງແຕ່ງຜະລິດຕະພັນເມັດພືດ (ຍົກເວັ້ນແປ້ງມັນຕົ້ນ ແລະ ການສີເຂົ້າ) |
| | 1074 | ການຜະລິດເສັ້ນໝີ່, ເສັ້ນເຝີ ແລະ ຜະລິດຕະພັນແປ້ງທີ່ຄ້າຍຄືກັນ |
| 2 | 1101-1103 | ການຜະລິດເຫຼົ້າ, ເບຍ ແລະ ການປຸງແຕ່ງເຄື່ອງດື່ມທີ່ມີທາດເຫຼົ້າ |
| | 1104 | ການຜະລິດເຄື່ອງດື່ມອື່ນໆ ທີ່ບໍ່ມີທາດເຫຼົ້າ |
| | 1105-1109 | ການຜະລິດນ້ຳດື່ມ ແລະ ນ້ຳດື່ມແຮ່ທາດ |
| 3 | 1201-1209 | ການຜະລິດຢາສູບ ແລະ ຜະລິດຕະພັນໃຊ້ແທນຢາສູບ |
| 4 | 1313 | ການຟອກ ແລະ ຍ້ອມແຜ່ນແພ |
| 5 | 1511 | ການຟອກໜັງ, ການຍອມສີ, ຕົບແຕ່ງຂົນສັດ ແລະ ໜັງສັດ |
| 6 | 1701 | ການຜະລິດເຫຍື້ອເຈ້ຍ, ເຈ້ຍ ແລະ ກະດາດແຂງ |
| 7 | 1910 | ການຜະລິດ ຜະລິດຕະພັນຖ່ານຫີນ ແລະ ຖ່ານໄມ້ |
| | 1929 | ການຜະລິດ ແລະ ການປຸງແຕ່ງນ້ຳມັນຈາກພືດ |

| | | |
|---|---|---|
| 8 | 2011 | ການຜະລິດສານເຄມີພື້ນຖານ, ອົກຊີເຈນ, ແກັສ ແລະ ນ້ຳກັ່ນ |
| | 2013 | ການຜະລິດປລາສະຕິກ ແລະ ຢາງສັງເຄາະໃນຮູບແບບຂັ້ນຕົ້ນ |
| | 2022 | ການຜະລິດນ້ຳສີ, ນ້ຳມັນລັດເງົາ, ສີເຄືອບ, ນ້ຳມຶກການພິມ ແລະ ກາວຕິດ |
| | 2023 | ການຜະລິດສະບູ, ຜະລິດຕະພັນຊັກລ້າງ, ນ້ຳຫອມ ແລະ ນ້ຳຢາລ້າງຫ້ອງນ້ຳ ອື່ນໆ |
| | 2029 | ການຜະລິດຜະລິດຕະພັນເຄມີ, ທາດລະເບີດ, ດອກໄມ້ໄຟ, ຫົວເຊື້ອນ້ຳຫອມ ແລະ ຫົວເຊື້ອນ້ຳມັນ |
| | 2030 | ການຜະລິດເສັ້ນໄຍສັງເຄາະ |
| 9 | 2100 | ການຜະລິດຢາປົວພະຍາດ |
| 10 | 2211-2219 | ການຜະລິດຜະລິດຕະພັນຢາງ, ຢາງຕົບລົດ ແລະ ຜະລິດຕະພັນຢາງຮັບໃຊ້ການແພດ |
| | 2221-2223 | ການຜະລິດຜະລິດຕະພັນປລາສະຕິກ |
| 11 | 2310 | ການຜະລິດແກ້ວ ແລະ ຜະລິດຕະພັນຈາກແກ້ວ |
| | 2391 | ການຜະລິດຜະລິດຕະພັນຫຼອມຍາກ, ຄອນກຣີດ, ດິນຈີ່, ດິນເຜົາຮັກສາຄວາມຮ້ອນ ແລະ ຊີແມັກ |
| | 2394 | ການຜະລິດຊີມັງ, ການຜະລິດຫີນກາວ (ຢິບຊຳ), ປູນຂາວ ແລະ ປູນຕິດເຄືອບອື່ນໆ |
| | 2395 | ການຜະລິດຜະລິດຕະພັນຈາກຄອນກຣີດ, ຊີມັງ ແລະ ປູນ |
| | 2396 | ການຕັດ, ຂັດ, ຕົບແຕ່ງ ແລະ ການແກະສະລັກຫີນ |
| | 2399 | ການໂມ້ຫີນ, ຂຸບຫີນ, ຜະລິດຕະພັນແຮ່ທາດທີ່ບໍ່ແມ່ນໂລຫະ |
| 12 | 2410 | ການຜະລິດເຫຼັກຂັ້ນພື້ນຖານ ແລະ ເຫຼັກກ້າອື່ນໆ |
| | 2420 | ການຜະລິດໂລະຫະມີຄ່າຂັ້ນພື້ນຖານ ແລະ ບໍ່ແມ່ນທາດເຫຼັກອື່ນໆ |
| | 2431 | ການຫຼອມເຫຼັກ ແລະ ເຫຼັກກ້າ |
| | 2432 | ການຫຼອມໂລຫະທີ່ບໍ່ແມ່ນເຫຼັກ |
| 13 | 3830 | ການຜະລິດຄືນໃໝ່ສິ່ງເສດເຫຼືອທຸກປະເພດ (ຍົກເວັ້ນ ສິ່ງເສດເຫຼືອປະເພດ ເຄື່ອງເອເລັກໂຕຣນິກ ແລະ ໝໍ້ໄຟເກົ່າ) |

**ມາດຕາ 2 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເຜີຍແຜ່ ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 3 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ສີ່ສິບຫ້າ ວັນ ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ລັດຖະມົນຕີ

ມະໄລທອງ ກົມມະສິດ